# ການລົງສຳພາດ ຄວາມຕ້ອງການຂອງຄອບຄົວເດັກນ້ອຍພິການ ແລະ ແມ່ ຍິງຊົນເຜົ່າ ເມືອງ ປາກແບ່ງ ແລະ ເມືອງ ງາ ແຂວງ ອຸດົມໄຊ




| ID: | Author: | Organization: | Created date: |
|---|---|---|---|
| 88 | ACDA | ACDA's | 2020-06-16 00:00:00 |

## 1. ກ່ຽວກັບສະພາບບັນຫາທີ່ໂຄງການຢາກຈະແກ້ໄຂ / About the problem that project want to solve.

ປັບປຸງການເຂົ້າເຖິງການສຶກສາຂັ້ນພື້ນຖານ ສຳລັບເດັກພິການໂດຍຜ່ານການສະໜັບສະໜູນ ໂຄງການສ້າງລາຍໄດ້ໃຫ້ພໍ່ແມ່ ແລະ ປູກຈິດ ສຳ ນຶກຂອງຊຸມຊົນໃນ 12 ບ້ານແລະ 2 ໂຮງຮຽນສຶກສາລວມຢູ່ ເມືອງ ປາກແບງ ແລະ ເມືອງ ງາ ແຂວງ ອຸດົມໄຊ.

## 2. ໂຄງການໄດ້ເຮັດຫຍັງແດ່ເພື່ອແກ້ໄຂບັນຫາ / About how the project solve the problems

- ເພື່ອກຳນົດບັນຫາ ແລະ ຄວາມຕ້ອງການສະມາຊິກຄົນພິການຢູ່ໃນບ້ານ.
- ເພື່ອສ້າງຄວາມສາມັກຄີກັບກຸ່ມຄົນພິການ ແລະ ກຸ່ມເປົ້າໝາຍໃນບ້ານ.

## 3. ຜົນສຳເລັດຂອງໂຄງການ / Results of the project

- ສັງເກດເຫັນໄດ້ວ່າທຸກພາກສ່ວນທາງພາກລັດ ແລະ ທາງສະມາຄົມໄດ້ໃຫ້ຄວາມສົນໃຈຕໍ່ການລົງເກັບກຳຂໍ້ມູນ ການສຳພາດຂອງທີມງານຢ່າງຫ້າວຫັນ
- ສາມາດເຂົ້າເຖິງຄອບຄົວຂອງຄົນພິການຢ່າງຈະແຈ້ງໄດ້ເຂົ້າເຖິງສະພາບເປັນຢູ່ຂອງຄົນພິການພາຍໃນເປົ້າໝາຍເຫັນຄວາມເປັນໄປໄດ້ ແລະ ທ່າແຮງຂອງແຕ່ລະຄອບຄົວໃນການປູກ ການລ້ຽງ ຕ່າງໆຂອງໂຄງການດັ່ງກວ່າ
- ນອກຈາກນີ້ແລ້ວສັງເກດເຫັນໄດ້ວ່າຄອບຄົວຜູ້ທີ່ມີສະມາຊິກເປັນຄົນພິການແມ່ນໃຫ້ຄວາມຮ່ວມມືຢ່າງເຕັມສ່ວນໃນການ ຕອບ - ຄຳຖາມ ແລະ ໃຫ້ຄຳສຳພາດກັບທີມງານຢ່າງສັນເຈນ.

## 4. ປັດໄຈສູ່ຜົນສຳເລັດ / Factors of success

- ສັງເກດເຫັນທຸກພາກສ່ວນໄດ້ເອົາໃຈໃສ່ ແລະ ຕອບສະໜອງກັບໂຄງການດັ່ງກວ່າເປັນຢ່າງດີ
- ນອກນີ້ຍັງສັງເກດເຫັນໄດ້ວ່າການຕອບຮັບຂອງແຕ່ລະຄອບຄົວແມ່ນພ້ອມທີ່ຈະໃຫ້ການສະໜັບສະໜູນ ແລະ ຮ່ວມມືເປັນຢ່າງດີ
- ທີມງານໄດ້ເຂົ້າໃຈເຖິງຊີວິດການເປັນຢູ່ຂອງຄົນພິການ ແລະ ທາງດ້ານເສດຖະກິດພາຍໃນຄອບຄົວຂອງຄົນພິການ
- ທີມງານໄດ້ເຂົ້າໃຈເຖິງວິທີການສຳພາດ ການໃຊ້ແບບຟອມ ສອບຖາມເພື່ອໃຫ້ຄອບຄົວຂອງຄົນພິການໃຫ້ເຂົ້າໃຈ ແລະ ຄອບຄົວຄົນພິການສາມາດ ຕອບ - ຖາມ ໄດ້ດີ.
- ທີມງານໄດ້ຮຽນຮູ້ການປະຕິບັດວຽກງານຕົວຈິງລົງສູ່ຊຸມຊົນເພື່ອເຂົ້າເຖິງຄົນພິການ ແລະ ຄອບຄົວຜູ້ທຸກຍາກ

## 5. ຂໍ້ຈຳກັດທີ່ເຮັດໃຫ້ບໍ່ສຳເລັດຜົນໄດ້ດີ / Limitations

- ການສື່ສານທາງດ້ານພາສາເພາະມີບາງຄອບຄົວກໍ່ຍັງບໍ່ເຂົ້າໃຈພາສາລາວຫລາຍເທົ່າທີ່ຄວນ.
- ຄວາມຮູ້ ຄວາມສາມາດແຕ່ກຕ່າງກັນເຮັດໃຫ້ບໍເຂົ້າໃຈລະອຽດດີ, ໄດ້ໃຊ້ເວລາອະທິບາຍຍາວນານເພື່ອເປັນເປັນພາສາຂອງເຂົາເຈົ້າ
- ການເຂົ້າຫາຄອບຄົວຄົນພິການແມ່ນຍັງພົບຄວາມຫຍຸ້ງຍາກເນື່ອງຈາກວ່າ ສະມາຊິກບໍ່ຢູ່ເຮືອນ, ໄປໄຮ່ ໄປສວນ ນຳພໍ່ແມ່ ຜູ້ປົກຄອງ ຈຳເປັນຕ້ອງໄດ້ລໍຖ້າ, ແຕ່ລະຄອບຄົວບ້ານຢູ່ໆງຫ່າງກັນ ແລະ ເສັ້ນທາງເຂົ້າໄປຍາກ ຢູ່ເທິງພູສູງໂນນ

## 6. ຂໍ້ແນະນຳສຳລັບຜູ້ທີ່ສົນໃຈຢາກທົດລອງນຳໃຊ້ / Recommendations for scaling up

ແຜນປະຕິບັດງານນີ້ຈະສະໜັບສະໜູນ ໂຄງການທີມງານຂອງ ACDA ສາມາດດຳເນີນການຈັດຕັ້ງປະຕິບັດເພື່ອປະເມີນບັນຫາແລະຄວາມຕ້ອງການຂອງເດັກນ້ອຍພິການໃນຕະຫຼອດການຮ່ວມມືທີ່ດີຂອງແຕ່ລະພາກສ່ວນຂອງລັດຖະບານທ້ອງຖິ່ນໂດຍເຕັກນິກ ແລະ ງົບປະມານໂດຍໂຄງການທີມງານຂອງ ACDA ເພື່ອບັນລຸເປົ້າໝາຍ ແລະຈຸດປະສົງຂອງ ປັບປຸງການເຂົ້າເຖິງການສຶກສາຂັ້ນພື້ນຖານ ສຳລັບເດັກພິການໂດຍຜ່ານການສະໜັບສະໜູນ ໂຄງການສ້າງລາຍໄດ້ໃຫ້ພໍ່ແມ່ແລະປູກຈິດສຳນຶກຂອງຊຸມຊົນໃນ 12 ບ້ານ ແລະ 2 ໂຮງຮຽນສຶກສາລວມຢູ່ເມືອງປາກແບງ ແລະ ເມືອງງາ ແຂວງອຸດົມໄຊ.







